# ກົດລະບຽບຂັ້ນຕອນສໍາລັບຂອງ **Washington Health Benefit Exchange**
## ການອຸທອນ

**1.** ຈຸດປະສົງ
**2.** ການຕີຄວາມໝາຍ
**3.** ຄໍາຕັດສິນແນວໃດແດ່ທີ່ສາມາດຖືກອຸທອນໄດ້
**4.** ການຮ້ອງຂໍເອົາການອຸທອນ
**5.** ການຍົກເລີກການອຸທອນ
**6.** ການອຸທອນເຮັດໃຫ້ແລ້ວໄວ
**7.** ການແກ້ໄຂບັນຫາທີ່ບໍ່ເປັນທາງການ
**8.** ການປະຊຸມກ່ອນການຟັງເລື່ອງ
**9.** ໃບແຈ້ງການເລື່ອງການຟັງເລື່ອງ
**10.** ການຟັງເລື່ອງ
**11.** ມາດຕະຖານຂອງການກວດເບິ່ງຄືນ
**12.** ຄໍາຕັດສິນຂອງການອຸທອນ
**13.** ການອຸທອນໃສ່ຄໍາຕັດສິນຂອງ **Exchange** ໄປຫາ **HHS**
**14.** ການເຮັດໝາຍນັດພົບໃໝ່ສໍາລັບການປະຊຸມກ່ອນການຟັງເລື່ອງ ຫລື ການຟັງເລື່ອງ
**15.** ການແຕ່ງຕັ້ງຜູ້ຕາງໜ້າເພື່ອຈະສະແດງຕົວສໍາລັບຜູ້ອຸທອນ
**16.** ນາຍແປພາສາ
**17.** ການຖອນຄໍາຮ້ອງຂໍເອົາການຟັງເລື່ອງ
**18.** ການສົ່ງເອກສານໄປຫາ **Exchange**

**1.** ຈຸດປະສົງ

ກົດລະບຽບຂັ້ນຕອນເຫລົ່ານີ້ໄດ້ເລີ້ມຕົ້ນເວົ້າເຖິງການດໍາເນີນການສໍາລັບການອຸທອນໃສ່ການພິຈາລະນາພົບເຫັນໃນເງື່ອນໄຂຮັບເອົາຊຶ່ງໄດ້ຖືກເຮັດອອກມາໂດຍ Washington Health Benefit Exchange (WAHBE, ຫລື Exchange). ກົດລະບຽບເຫລົ່ານີ້ວາງໃຊ້ກົດລະບຽບຂອງຣັດຖະບານກາງຢູ່ໃນ 45 CFR subpart F ຊຶ່ງປົກຄອງການອຸທອນໃສ່ການພິຈາລະນາພົບເຫັນຂອງ Exchange. ຈະບໍ່ມີແນວໃດຢູ່ໃນກົດລະບຽບເຫລົ່ານີ້ມີຈຸດປະສົງທີ່ຈະຈໍາກັດ ຫລື ປ່ຽນແປງກົດກໍານົດ ຫລື ສິດທີ່ຢູ່ໃນກົດບັນຍັດ ຫລື ກົດລະບຽບອື່ນໆແນວໃດແນວນຶ່ງ. ຖ້າຫາກວ່າມັນມີຄວາມຂັດແຍ້ງລະຫວ່າງກົດລະບຽບເຫລົ່ານີ້ແລະ ກົດລະບຽບຂອງຣັດຖະບານກາງຢູ່ໃນ 45 CFR part 155, subpart F, ກົດລະບຽບຂອງຣັດຖະບານກາງຈະມີອໍານາດເໜືອກວ່າ.

ສິດອໍານາດ: 45 CFR part 155, subpart F

**2.** ການຕີຄວາມໝາຍ

ສໍາລັບຈຸດປະສົງຂອງກົດລະບຽບຂັ້ນຕອນເຫລົ່ານີ້, ເງື່ອນໄຂຕໍ່ລົງໄປນີ້ມີຄວາມໝາຍຕໍ່ລົງໄປນີ້:

(1) "ບັນທຶກຂອງການອຸທອນ" ໝາຍເຖິງຄໍາຕັດສິນຂອງການອຸທອນ, ເຈັ້ຽ ແລະ ຄໍາຮ້ອງຂໍທຸກໆຢ່າງທີ່ຖືກຍື່ນຢູ່ໃນການດໍາເນີນການ, ແລະ, ຖ້າຫາກວ່າການຟັງເຣື່ອງໄດ້ຖືກຈັດຂຶ້ນ, ການບັນທຶກຄໍາໃຫ້ການຂອງການຟັງເຣື່ອງ ຫລື ລາຍງານທາງການທີ່ບັນຈຸເນື້ອໃນສໍາຄັນວ່າແມ່ນຫຍັງໄດ້ເກີດຂຶ້ນໃນເວລາຟັງເຣື່ອງ, ແລະ ຫລັກຖານສະແດງໃຫ້ເຫັນຕ່າງໆທີ່ຖືກນໍາມາສະເນີໃນເວລາຟັງເຣື່ອງ.

(2) "ຜູ້ອຸທອນ" ໝາຍເຖິງຜູ້ຮ້ອງຂໍ, ຜູ້ຈົດຊື່, ນາຍຈ້າງ, ຫລື ພະນັກງານຜູ້ທີ່ໄດ້ຍື່ນຄໍາຮ້ອງຂໍເອົາການອຸທອນທີ່ມີຄຸນຄ່າໃຊ້ການໄດ້.

(3) "De novo (ເດີໂນໂວ)" ໝາຍເຖິງການກວດເບິ່ງຄໍາອຸທອນຄືນທີ່ໄດ້ຖືກເຮັດໂດຍປາສຈາກເຮັດຕາມຄໍາຕັດສິນໃນສໍານວນຄະດີເທື່ອກ່ອນໆ.

(4) "Exchange (ເອກຊ໌ເຊນຊ໌)" ໝາຍເຖິງ Washington Health Benefit Exchange ທີ່ຖືກກໍ່ຕັ້ງຂຶ້ນມາພາຍໃຕ້ chapter 43.71 RCW.

(5) "ເຫດຜົນດີ" ໝາຍເຖິງເຫດຜົນສໍາຄັນ ຫລື ການຢືນຢັນເຫດຜົນທາງກົດໝາຍສໍາລັບຄວາມຜິດພາດທີ່ຈະມາປາກົດຕົວ, ສະແດງຕົວ, ຫລື ຕອບຕໍ່ຄະດີ; ເຫດຜົນທີ່ດີສໍາລັບສິ່ງທີ່ຄົນໃດຄົນນຶ່ງໄດ້ເຮັດ ຫລື ບໍ່ໄດ້ເຮັດ, ລວມເອົາແຕ່ບໍ່ຈໍາກັດໄປເຖິງການເຈັບປ່ວຍ, ສະພາບການອື່ນໆເໜືອກວ່າການຄວບຄຸມໄດ້ຂອງບຸກຄົນນັ້ນ, ຫລື ຄວາມຜິດພາດທີ່ຈະຕອບກັບຄືນມາຍ້ອນວ່າໃບແຈ້ງການໄດ້ຖືກຂຽນໃນພາສາທີ່ບຸກຄົນນັ້ນບໍ່ເຂົ້າໃຈ.

(6) "ເຈົ້າໜ້າທີ່ຮັບຜິດຊອບ" ໝາຍເຖິງບຸກຄົນທີ່ບໍ່ລໍາອຽງຜູ້ທີ່ບໍ່ໄດ້ກ່ຽວພັນນໍາການຕັດສິນໃນເງື່ອນໄຂຮັບເອົາຕົ້ນສະບັບ ແລະ ຜູ້ທີ່ໄດ້ຖືກແຕ່ງຕັ້ງໂດຍ Exchange ເພື່ອຈະດໍາເນີນການອຸທອນພາຍໃຕ້ກົດລະບຽບຂັ້ນຕອນເຫລົ່ານີ້.

(7) "ປະໄວ້ກ່ອນ" ໝາຍເຖິງເອົາປະໄວ້ທາງຂ້າງການຟ້ອງຮ້ອງແຕ່ກ່ອນ.

(8) "ໃບໜັງສືແຈ້ງການ" ຫລື "ເປັນລາຍລັກອັກສອນ" ໝາຍເຖິງຖືກສົ່ງໃຫ້ໂດຍທາງ ໄປສະນີ, ທາງແຟກຊ໌, ຫລື ອີແມລ໌.

## 3. ຄໍາຕັດສິນແນວໃດແດ່ທີ່ສາມາດຖືກອຸທອນໄດ້

(1) ການອຸທອນສ່ວນບຸກຄົນ: ຜູ້ຮ້ອງຂໍ ຫລື ຜູ້ຈົດຊື່ຈະຂໍອຸທອນ:

(a) ຄໍາຕັດສິນໃນເງື່ອນໄຂໄດ້ຮັບໃສ່ຄໍາຮ້ອງຂໍເບື້ອງຕົ້ນສໍາລັບການຈົດຊື່ເຂົ້ານໍາໂຄງການສຸຂະພາບທີ່ມີສິດໄດ້ຮັບ, ລວມທັງຈໍານວນເງິນຂອງການຈ່າຍເງິນລ່ວງໜ້າຂອງເຄຣດິດເງິນພາສີສໍາລັບຄ່າທໍານຽມ ແລະ ຈໍານວນເງິນຂອງການລຸດຄ່າຈ່າຍຊ່ວຍກັນ.

(b) ການພິຈາລະນາເບິ່ງໃຫມ່ໃນເງື່ອນໄຂໄດ້ຮັບສຳລັບຜູ້ຈົດຊື່ປັດຈຸບັນຢູ່ໃນໂຄງການສຸຂະພາບທີ່ມີສິດໄດ້ຮັບ,ລວມທັງຈຳນວນເງິນຂອງການຈ່າຍເງິນລ່ວງຫນ້າຂອງເຄຣດິດເງິນພາສີສຳລັບຄ່າທຳນຽມ ແລະ ຈຳນວນເງິນຂອງການລຸດຄ່າຈ່າຍຊ່ວຍກັນ.

(c) ການຕັດສິນໃນເງື່ອນໄຂໄດ້ຮັບໃສ່ຄຳຮ້ອງຂໍໃນຣະຫວ່າງຣະຍະເວລາຂອງການຈົດຊື່ພິເສດ,ລວມທັງຈຳນວນເງິນຂອງການຈ່າຍເງິນລ່ວງຫນ້າຂອງເຄຣດິດເງິນພາສີສຳລັບຄ່າທຳນຽມ ແລະ ຈຳນວນເງິນຂອງການລຸດຄ່າຈ່າຍຊ່ວຍກັນ.

(d) ຄວາມຜິດພາດຂອງ Exchange ທີ່ຈະສົ່ງໃຫ້ທັນຕາມເວລາໃບແຈ້ງການກ່ຽວກັບຄຳຕັດສິນໃນເງື່ອນໄຂໄດ້ຮັບ (ການພິຈາລະນາເບິ່ງຫລືການພິຈາລະນາເບິ່ງໃຫມ່).

(e) ການພິຈາລະນາເບິ່ງເງື່ອນໄຂໄດ້ຮັບສຳລັບການຍົກເວັ້ນໃສ່ກົດບັງຄັບສ່ວນບຸກຄົນໃຫ້ມີປະກັນພັຍຖ້າຫາກວ່າກ່ຽວຂ້ອງນຳການສອດຄ່ອງນຳກົດຫມາຍ 45 CFR §155.605

(2) ການອຸທອນຂອງນາຍຈ້າງ: ນາຍຈ້າງຈະຂໍອຸທອນການພິຈາລະນາພົບເຫັນວ່າ:

(a) ນາຍຈ້າງບໍ່ສະເນີເອື້ອເຟື້ອປະກັນພັຍສຸຂະພາບໃຫ້ຊຶ່ງເອົາການຄຸ້ມກັນທີ່ຈຳເປັນຕ່ຳສຸດໃຫ້ແລະສອດຄ່ອງນຳມາດຕະຖານມູນຄ່າຕ່ຳສຸດ;ຫລື

(b) ການຄຸ້ມກັນທີ່ຈຳເປັນຕ່ຳສຸດ,ໂຄງການມູນຄ່າຕ່ຳສຸດທີ່ນາຍຈ້າງສະເນີໃຫ້ແມ່ນບໍ່ສາມາດຈ່າຍໄດ້ສຳລັບພະນັກງານ.

ສິດອຳນາດ: 45 CFR section 155.505; 45 CFR section 155.555; 45 CFR section 155.605

## 4. ການຮ້ອງຂໍເອົາການອຸທອນ

(1) ການອຸທອນຕ້ອງຖືກຮ້ອງຂໍເອົາພາຍໃນ 90 ວັນ ຂອງວັນທີຂອງໃບແຈ້ງການກ່ຽວກັບການພິຈາລະນາເບິ່ງເງື່ອນໄຂຮັບເອົາ.

(2) ການອຸທອນຈະຖືກຮ້ອງຂໍເອົາໃນແບບທາງຕໍ່ລົງໄປນີ້:

(a) U.S. ໄປສະນີ, ໂດຍການສົ່ງໃບຟອມອຸທອນລວມທັງໃບແຈ້ງການເງື່ອນໄຂໄດ້ຮັບຂອງ Exchnage ໄປຫາທີ່ຢູ່ໃນໃບຟອມອຸທອນ.

(b) ອີແມລ໌, ໂດຍການສົ່ງອີແມລ໌ຄຳຮ້ອງຂໍອຸທອນໄປທີ່ appeals@wahbexchange.org. ຄຳຮ້ອງຂໍທາງອີແມລ໌ຈະຕ້ອງລວມເອົາຊື່, ທີ່ຢູ່, ແລະ ເລກໂທຣະສັບຂອງບຸກຄົນຜູ້ທີ່ທຳການຮ້ອງຂໍເອົາການອຸທອນ, ວັນທີຂອງການພິຈາລະນາເບິ່ງທີ່ຖືກອຸທອນ, ແລະ ເຫດຜົນສຳລັບການອຸທອນ.

(c) ໂທຣະສັບ, ໂດຍການຕິດຕໍ່ໄປຫາ Exchange ໄດ້ທີ່ 1-855-859-2512 (ໂທຟຣີ).

(d) ທາງແຟກຊ໌, ໂດຍການສົ່ງຄຳຮ້ອງຂໍເອົາການອຸທອນມາທາງແຟກຊ໌ໄປທີ່ 360-841-7653.

(e) ອິນເຕີແນດ, ໂດຍການຂຽນປະກອບໃບຟອມການອຸທອນທາງອອນລາຍນ໌ໄດ້ທີ່ www.wahbexchange.org.

(f) ການສົ່ງໃຫ້ດ້ວຍມືຕົນເອງ, ຫລື ການສົ່ງໃຫ້ໂດຍບໍຣິສັດບໍຣິການສົ່ງໃຫ້, ໄປທີ່ Exchange, 810 Jefferson Street SE, Olympia, Washington 98501.

(3) The Exchange ຕ້ອງ:

(a) ຕາມຄຳຮ້ອງຂໍ, ຊ່ວຍເຫລືອຜູ້ຮ້ອງຂໍ ຫລື ຜູ້ຈົດຊື່ໃນການທຳການຮ້ອງຂໍເອົາການອຸທອນ;

(b) ບໍ່ຈຳກັດ, ຫລື ເຂົ້າແຊກແຊງນຳສິດທິຂອງຜູ້ຮ້ອງຂໍ ຫລື ຜູ້ຈົດຊື່ທີ່ຈະທຳການອຸທອນ; ແລະ

(c) ຖືວ່າມີຄຸນຄ່າໃຊ້ການໄດ້ໃນຄຳຮ້ອງຂໍເອົາການອຸທອນທີ່ຖືກສົ່ງໄປຫາ Washington State Department of Social and Health Services ຢ່າງບໍ່ຖືກຕ້ອງ, Washington State Health Care Authority, ຫລື Washington State Office of Administrative Hearings, ແຕ່ວ່າບໍ່ດັ່ງນັ້ນຈະມີຄຸນຄ່າໃຊ້ການໄດ້.

(4) ເມື່ອເວລາ Exchange ໄດ້ຮັບຄຳຮ້ອງຂໍເອົາການອຸທອນ, Exchange ຈະສົ່ງໄປຫາບຸກຄົນຜູ້ທີ່ຮ້ອງຂໍເອົາການອຸທອນ:

(a) ໃບແຈ້ງການວ່າການອຸທອນໄດ້ຖືກຮັບເອົາແລ້ວ;

(b) ຕາຕະລາງເວລາສຳລັບການດຳເນີນການອຸທອນ, ລວມທັງໃບແຈ້ງການກ່ຽວກັບວັນທີ ແລະ ເວລາຂອງການປະຊຸມກ່ອນການຟັງເຣື່ອງ ແລະ ການຟັງເຣື່ອງ, ຖ້າຫາກວ່າການຟັງເຣື່ອງແມ່ນຈຳເປັນຕ້ອງມີ;

(c) ຣາຍຣະອຽດກ່ຽວກັບເງື່ອນໄຂໄດ້ຮັບສຳລັບການຈ່າຍເງິນລ່ວງໜ້າສຳລັບເຄຣດິດພາສີຄ່າທຳນຽມ ແລະ ເງິນຫັກອອກຄ່າຈ່າຍຮ່ວມກັນໃນຣະຫວ່າງການອຸທອນ;

(d) ຄຳອະທິບາຍວ່າການຈ່າຍເງິນລ່ວງໜ້າທຸກໆຢ່າງໃນເຄຣດິດພາສີຄ່າທຳນຽມທີ່ຖືກຈ່າຍໄປໃນນາມຂອງຜູ້ອຸທອນໃນຣະຫວ່າງການອຸທອນຈະມີການໄລ່ສະເລັ່ຽໃສ່ໃບພາສີຣາຍໄດ້ສົ່ງຄືນທ້າຍປີຂອງຜູ້ອຸທອນໂດຍພະແນກ Internal Revenue Service;

(e) ຣາຍຣະອຽດກ່ຽວກັບການຮ້ອງຂໍເອົາການຊ່ວຍເຫລືອໃນການເຂົ້າເຖິງ ຫລື ການບໍຣິການດ້ານນາຍພາສາໂດຍການສອດຄ່ອງນຳກົດໝາຍຂອງຣັດຖະບານກາງຕາມທີ່ຖືກບັນຣະຍາຍຢູ່ໃນກົດໝາຍ Procedural Rule 16.

(5) ຜູ້ອຸທອນຕ້ອງມີໂອກາດທີ່ຈະກວດເບິ່ງບັນທຶກຂອງການອຸທອນຄືນ, ລວມທັງເອກສານ ແລະ ບັນທຶກທຸກໆ

ຢ່າງທີ່ຈະຖືກໃຊ້ໂດຍ Exchange ໃນເວລາຟັງເຣື່ອງ, ໃນເວລາອັນເໝາະສົມກ່ອນການຟັງເຣື່ອງ, ແລະ ໃນເວລາຂອງການຟັງເຣື່ອງ.

(6) ເມື່ອເວລາ Exchange ໄດ້ຮັບຄຳຮ້ອງຂໍເອົາການອຸທອນທີ່ບໍ່ມີມູນຄ່າໃຊ້ການໄດ້ຍ້ອນວ່າມັນບໍ່ສອດຄ່ອງນຳກົດກຳນົດຂອງພາກສ່ວນນີ້,Exchange ຕ້ອງໄດ້:
   (a) ສົ່ງໃບໜັງສືແຈ້ງການໄປຫາຜູ້ອຸທອນ ຫລື ຜູ້ຈົດຊື່ວ່າຄຳຮ້ອງຂໍເອົາການອຸທອນບໍ່ໄດ້ຖືກຮັບເອົາ ແລະ ເຫດຜົນວ່າເປັນຫຍັງມັນຈຶ່ງບໍ່ຖືກຮັບເອົາ; ແລະ
   (b) ຖືວ່າມີມູນຄ່າໃຊ້ການໄດ້ໃບຄຳຮ້ອງຂໍເອົາການອຸທອນທີ່ຖືກດັດແປງແລ້ວວ່າມັນສອດຄ່ອງນຳກົດກຳນົດຂອງພາກສ່ວນນີ້.

(7) ເມື່ອເວລາ Exchange ໄດ້ຮັບຄຳຮ້ອງຂໍເອົາການອຸທອນທີ່ຂັດແຍ້ງໂຕ້ຖຽງເງື່ອນໄຂຮັບເອົາຂອງຜູ້ອຸທອນໃນ Washington Apple Health, the Exchange ຈະສົ່ງການອຸທອນໄປຫາ Health Care Authority ໂດຍຜ່ານການອັບໂຫລດທາງອອເລັກໂຕຣນິກທີ່ປອດພັຍໄປໃສ່ Healthplanfinder ຂອງຜູ້ອຸທອນ.

ສິດອຳນາດ: 45 CFR section 155.520

## 5. ການຍົກເລີກການອຸທອນ

(1) ເຈົ້າໜ້າທີ່ຮັບຜິດຊອບຕ້ອງຍົກເລີກການອຸທອນຖ້າຫາກວ່າ:
   (a) ການອຸທອນບໍ່ໄດ້ຖືກຮ້ອງຂໍເອົາສຳລັບນຶ່ງໃນເຫດຜົນທີ່ຖືກບົ່ງຢູ່ໃນ Procedural Rule 3.
   (b) ຜູ້ອຸທອນບໍ່ໄດ້ຮ້ອງຂໍເອົາການອຸທອນພາຍໃນ 90 ວັນຂອງວັນທີຂອງໃບແຈ້ງການກ່ຽວກັບເງື່ອນໄຂໄດ້ຮັບທີ່ກຳລັງຖືກຍື່ນອຸທອນ.
   (c) ຜູ້ອຸທອນບໍ່ໄດ້ມາປາກົດຕົວໃນເວລາການປະຊຸມກ່ອນການຟັງເຣື່ອງ ຫລື ການຟັງເຣື່ອງທີ່ຖືກເຣັດໝາຍນັດໄວ້, ໂດຍປາສຈາກເຫດຜົນດີ.
   (d) ຜູ້ອຸທອນຖອນຄຳຮ້ອງຂໍເອົາການອຸທອນໂດຍອີງຕາມ Procedural Rule 17(1).
   (e) ຜູ້ອຸທອນເສັຽຊີວິດກ່ອນການອຸທອນຈະຖືກຈັດຂຶ້ນ.

(2) The Exchange ຕ້ອງສົ່ງໃບແຈ້ງການອອກໄປທັນຕາມເວລາໄປຫາຜູ້ອຸທອນຊຶ່ງກ່າວເຖິງ:
   (a) ເຫດຜົນຂອງການຍົກເລີກ.
   (b) ການຍົກເລີກຈະສະທ້ອນເຖິງເງື່ອນໄຂຮັບເອົາຂອງຜູ້ອຸທອນໄດ້ແນວໃດ ສຳລັບການຈ່າຍເງິນລ່ວງໜ້າສຳລັບເຄຣດິດພາສີຄ່າທຳນຽມ ແລະ ເງິນລຸດລົງຄ່າຈ່າຍຮ່ວມກັນ.
   (c) ຜູ້ອຸທອນຈະເຣັດໄດ້ແນວໃດ, ພາຍໃນ 30 ວັນ ຂອງໃບແຈ້ງການຂອງການຍົກເລີກ,

ຍື່ນຫນັງສືຄຳຮ້ອງທີ່ສະແດງໃຫ້ເຫັນເຫດຜົນດີວ່າເປັນຫຍັງການຍົກເລີກຄວນຈະຖືກລົບລ້າງ.

(d) ຈະດັດແປງການອຸທອນໄດ້ແນວໃດ ແລະ ຍື່ນໃຫມ່ອີກ.

(3) ການລົບລ້າງການຍົກເລີກ: ເຈົ້າຫນ້າທີ່ຮັບຜິດຊອບຕ້ອງລົບລ້າງການຍົກເລີກຖ້າຫາກວ່າຜູ້ອຸທອນເຮັດຫນັງສືຮ້ອງຂໍທີ່ສະແດງໃຫ້ເຫັນເຫດຜົນດີທີ່ຈະລົບລ້າງການຍົກເລີກ ແລະ ທີ່ຈະອະນຸຍາດການອຸທອນໃຫ້ດຳເນີນຕໍ່ໄປ.

(a) ຄຳຮ້ອງຂໍຕ້ອງກ່າວເຖິງເຫດຜົນສຳລັບເຫດຜົນດີບໍ່ໃຫ້ຍົກເລີກການອຸທອນ.

(b) ຜູ້ອຸທອນຕ້ອງເຮັດຄຳຮ້ອງຂໍເພື່ອຈະລົບລ້າງການຍົກເລີກພາຍໃນ 30 ວັນຂອງວັນທີຂອງໃບແຈ້ງການສຳລັບການຍົກເລີກ.

(c) ຜູ້ອຸທອນຈະຮ້ອງຂໍເອົາ, ເປັນລາຍລັກອັກສອນ, ການຟັງເລື່ອງກ່ຽວກັບຄຳຮ້ອງຂໍທີ່ຈະລົບລ້າງການຍົກເລີກ.

(d) The Exchange ຕ້ອງສົ່ງໃຫ້ຜູ້ອຸທອນໃບຫນັງສືປະຕິເສດຄຳຮ້ອງຂໍໃຫ້ລົບລ້າງການຍົກເລີກ, ຖ້າຫາກວ່າມັນຖືກປະຕິເສດ.

(e) ຖ້າຫາກວ່າເຈົ້າຫນ້າທີ່ຮັບຜິດຊອບລົບລ້າງການຍົກເລີກ, Exchange ຕ້ອງສົ່ງໄປໃຫ້ຜູ້ອຸທອນລາຍຣະອຽດຢູ່ໃນ Procedural Rule 4(4).

ສິດອຳນາດ: 45 CFR section 155.530

## 6. ການອຸທອນເຮັດໃຫ້ແລ້ວໄວ

(1) ຜູ້ອຸທອນຈະຮ້ອງຂໍເອົາການອຸທອນເຮັດໃຫ້ແລ້ວໄວເມື່ອເວລາຜູ້ອຸທອນສາມາດສະແດງໃຫ້ເຫັນຄວາມຕ້ອງການໂດຍທັນທີທັນໃດສຳລັບການປິ່ນປົວສຸຂະພາບຍ້ອນວ່າການດຳເນີນການອຸທອນຕາມປົກກະຕິສາມາດເປັນອັນຕະລາຍຕໍ່ຜູ້ອຸທອນ

(a) ຊີວິດ ຫລື ສຸຂະພາບ; ຫລື

(b) ຄວາມສາມາດທີ່ຈະເອົາມາໄດ້, ຮັກສາເອົາໄວ້, ຫລື ທຳງານສູງສຸດໄດ້ຄືນອີກ.

(2) ການອຸທອນເຮັດໃຫ້ແລ້ວໄວຕ້ອງຖືກຮ້ອງຂໍເອົາໃນແບບດຽວກັນກັບການອຸທອນທັມມະດາ, ຕາມທີ່ຖືກກ່າວໄວ້ຢູ່ໃນ Procedural Rule 4.

(3) ໃນເວລາທີ່ການອຸທອນເຮັດໃຫ້ແລ້ວໄວໄດ້ຖືກຮ້ອງຂໍເອົາ, ຜູ້ອຸທອນຕ້ອງຍື່ນເຂົ້າມາ

(a) ຫລັກຖານຂອງເຫດຜົນສຳລັບການອຸທອນເຮັດໃຫ້ແລ້ວໄວ; ແລະ

(b) ຫລັກຖານວ່າການພິຈາຣະນາເບິ່ງເງື່ອນໄຂຮັບເອົາແມ່ນບໍ່ຖືກຕ້ອງແນວໃດ.

(4) ຖ້າຫາກວ່າເຈົ້າໜ້າທີ່ຮັບຜິດຊອບອະນຸມັດຄຳຮ້ອງຂໍເອົາການອຸທອນເຣັດໃຫ້ແລ້ວໄວ, Exchange ຕ້ອງອອກຄຳຕັດສິນການອຸທອນຂັ້ນສຸດຂາດບໍ່ກາຍເກີນ 14 ວັນຫລັງຈາກທີ່ Exchange ໄດ້ຮັບຄຳຮ້ອງຂໍເອົາການອຸທອນເຣັດໃຫ້ແລ້ວໄວ.

(5) ຖ້າຫາກວ່າເຈົ້າໜ້າທີ່ຮັບຜິດຊອບປະຕິເສດຄຳຮ້ອງຂໍເອົາການອຸທອນເຣັດໃຫ້ແລ້ວໄວ, Exchange ຕ້ອງ:

(a) ຈັດການນຳຄຳຮ້ອງຂໍເອົາການອຸທອນພາຍໃຕ້ການດຳເນີນການອຸທອນມາດຕະຖານ ແລະ ອອກຄຳຕັດສິນຂອງການອຸທອນພາຍໃນ 90 ວັນຂອງການໄດ້ຮັບຄຳຮ້ອງຂໍ; ແລະ

(b) ແຈ້ງບອກຜູ້ອຸທອນ, ໂດຍທັນທີໂລດ ແລະ ປາສຈາກການຖ່ວງເວລາທີ່ບໍ່ຈຳເປັນ, ຜ່ານການແຈ້ງບອກທາງເອເລັກໂຕຣນິກ ຫລື ປາກເປົ່າ, ຖ້າຫາກວ່າເປັນໄປໄດ້, ກ່ຽວກັບການປະຕິເສດ ແລະ, ຖ້າຫາກວ່າການແຈ້ງບອກເປັນທາງປາກເປົ່າ, ຕິດຕາມນຳຜູ້ອຸທອນໂດຍທາງໃບແຈ້ງການ. ໃບແຈ້ງການຂອງການປະຕິເສດຕ້ອງລວມເອົາ—

(i) ເຫດຜົນຂອງການປະຕິເສດ;

(ii) ການອະທິບາຍວ່າຄຳຮ້ອງຂໍເອົາການອຸທອນຈະຖືກໂອນຕໍ່ໄປຫາການດຳເນີນການ 90ວັນທັມມະດາ; ແລະ

(iii) ການອະທິບາຍເຖິງສິດທິຂອງຜູ້ອຸທອນພາຍໃຕ້ການດຳເນີນການທັມມະດາ, ລວມທັງລາຍຣະອຽດຢູ່ໃນ Procedural Rule 4(4).

ສິດອຳນາດ: 45 CFR section 155.540

## 7. ການແກ້ໄຂບັນຫາທີ່ບໍ່ເປັນທາງການ

(1) The Exchange ຈະຊອກເອົາທີ່ຈະແກ້ໄຂບັນຫາການອຸທອນຜ່ານການດຳເນີນການແກ້ໄຂບັນຫາທີ່ບໍ່ເປັນທາງການຊຶ່ງຈະລວມເອົາສິ່ງຕໍ່ລົງໄປນີ້:

(a) ຫລັງຈາກທີ່ໄດ້ຮັບຄຳຮ້ອງຂໍເອົາການອຸທອນ, Exchange ຈະກວດເບິ່ງຄືນບັນທຶກຂອງເງື່ອນໄຂຮັບເອົາຂອງເຂົາເຈົ້າ ແລະ ບັນທຶກເອກສານທຸກໆຢ່າງທີ່ຜູ້ອຸທອນໄດ້ຍື່ນເຂົ້າມາ, ເພື່ອຈະພິຈາຣະນາເບິ່ງວ່າຄຳຮ້ອງຂໍເອົາການອຸທອນຂອງຜູ້ອຸທອນຈະສາມາດຖືກອະນຸມັດໃຫ້ ຫລື ບໍ່, ໂດຍປາສຈາກການດຳເນີນຕໍ່ໄປສູ່ການຟັງເຣື່ອງ. ຜູ້ອຸທອນ ຫລື ຜູ້ຕາງໜ້າຂອງຜູ້ອຸທອນອາດຈະຮ້ອງຂໍເອົານຳ Exchange ໄດ້ອີກຄືກັນການດຳເນີນການແກ້ໄຂບັນຫາທີ່ບໍ່ເປັນທາງການ.

(2) ຖ້າຫາກວ່າ Exchange ແລະ ຜູ້ອຸທອນເຫັນພ້ອມນຳທີ່ຈະແກ້ໄຂບັນຫາການອຸທອນ, ການຕົກລົງແກ້ໄຂບັນຫາທີ່ບໍ່ເປັນທາງການຈະສຸດຂາດ ແລະ ບັງຄັບໃຊ້, ແລະ ຜູ້ອຸທອນຕ້ອງແຈ້ງບອກ Exchange ເປັນລາຍລັກອັກສອນ ຫລື ໂດຍທາງໂທຣະສັບ, ວ່າເຂົາເຈົ້າຖອນຄຳອຸທອນ.

(3) ຜູ້ອຸທອນມີສິດໃນການປະຊຸມກ່ອນການຟັງເຣື່ອງ ແລະ/ຫລື ການຟັງເຣື່ອງຖ້າຫາກວ່າການແກ້ໄຂບັນຫາທີ່ບໍ່ເປັນທາງການຕົກລົງກັນບໍ່ໄດ້.

ສິດອຳນາດ: 45 CFR section 155.535

## 8. ການປະຊຸມກ່ອນການຟັງເຣື່ອງ

(1) ເຈົ້າຫນ້າທີ່ຮັບຜິດຊອບຈະຈັດການປະຊຸມກ່ອນການຟັງເຣື່ອງຂຶ້ນມາບໍ່ກາຍເກີນ 7 ວັນຕາມປະຕິທິນກ່ອນການຟັງເຣື່ອງ.

(2) ໃນເວລາການປະຊຸມກ່ອນການຟັງເຣື່ອງ, Exchange ແລະ ຜູ້ອຸທອນ, ຫລື ຜູ້ຕາງຫນ້າຂອງຜູ້ອຸທອນ, ຈະພິຈາຣະນາເບິ່ງວ່າ:

(a) ບັນຫາທີ່ຈະຖືກນຳມາສະເນີໃນເວລາການຟັງເຣື່ອງ, ລວມທັງບັນຫາທາງກົດຫມາຍ;
(b) ພະຍານຜູ້ທີ່ຈະມາໃຫ້ການໃນເວລາຟັງເຣື່ອງ, ແລະ ຂອບເຂດທຸກໆຢ່າງໃນຈຳນວນຂອງພະຍານ ຫລື ສິ່ງທີ່ເຂົາເຈົ້າຈະມາໃຫ້ການ;
(c) ເອກສານທີ່ຈະຖືກຍື່ນເຂົ້າມາໃນເວລາການຟັງເຣື່ອງ;
(d) ການແກ້ໄຂບັນຫາຂອງການຟັງເຣື່ອງທີ່ບໍ່ເປັນທາງການທີ່ອາດຈະເປັນໄປໄດ້; ແລະ
(e) ເຣື່ອງອື່ນຕ່າງໆກ່ຽວກັບການຈັດການຟັງເຣື່ອງທີ່ໃຊ້ໄດ້ດີພຽງພໍ.

(3) ການປະຊຸມກ່ອນການຟັງເຣື່ອງຈະຖືກດຳເນີນການໂດຍເຈົ້າຫນ້າທີ່ຮັບຜິດຊອບ, ໂດຍທາງໂທຣະສັບ ຫລື ແບບອື່ນໆທີ່ຖືກເຫັນພ້ອມນຳກັນໂດຍ Exchange ແລະ ຜູ້ອຸທອນ, ແລະ ຈະຖືກບັນທຶກໄວ້ທາງເອເລັກໂຕຣນິກ.

(4) ເຈົ້າຫນ້າທີ່ຮັບຜິດຊອບຈະອອກຄຳສັ່ງກ່ອນການຟັງເຣື່ອງທີ່ຈະກໍ່ຕັ້ງການກະທຳທີ່ຖືກເຮັດໃນເວລາການປະຊຸມກ່ອນການຟັງເຣື່ອງ, ລວມທັງການອອກຄຳສັ່ງທີ່ຖືກເຮັດໂດຍເຈົ້າຫນ້າທີ່ຮັບຜິດຊອບ ແລະ ການຕົກລົງສັນຍາຣະຫວ່າງ Exchange ແລະ ຜູ້ອຸທອນ.

(5) ຖ້າຫາກວ່າຜູ້ອຸທອນໄດ້ຖືກເອົາໃຫ້ໃບແຈ້ງການທີ່ດີພຽງພໍ ແລະ/ຫລື ເຫັນພ້ອມນຳ, ແລະ ເຈົ້າຫນ້າທີ່ຮັບຜິດຊອບພົບເຫັນວ່າມັນເປັນທີ່ເຫມາະສົມ, ແລະ ຄຳສັ່ງຂັ້ນສຸດທ້າຍສາມາດເຮັດອອກມາໄດ້ໃນການ

ສະລູບຄວາມຂອງການປະຊຸມກ່ອນການຟັງເຣື່ອງ. ບໍ່ມີແນວໃດພາຍໃນຄໍາສັ່ງອັນນີ້ຈະຖືກກີດກັ້ນທີ່ຈະຈໍາກັດສິດທິຂອງຜູ້ອຸທອນໃນການແຈ້ງການທີ່ເໝາະສົມ, ການດໍາເນີນຕໍ່ໄປ, ຫລື ການຟັງເຣື່ອງ.

ສິດອໍານາດ: 45 CFR section 155.535

## 9. ໃບແຈ້ງການເຣື່ອງການຟັງເຣື່ອງ

(1) ເມື່ອເວລາ Exchange ໄດ້ເຣັດໝາຍນັດການຟັງເຣື່ອງ, ເຂົາເຈົ້າຕ້ອງສົ່ງໃບແຈ້ງການໄປຫາຜູ້ອຸທອນບໍ່ກາຍເກີນ 15 ວັນຕາມປະຕິທິນກ່ອນວັນທີຂອງການຟັງເຣື່ອງ. ໃບແຈ້ງການຕ້ອງບອກວັນທີ, ເວລາ, ແລະ ເຣື່ອງກ່ຽວກັບການດໍາເນີນການຟັງເຣື່ອງ. ສໍາລັບການໂທເວົ້າປະຊຸມກັນທາງໂທຣະສັບ, ໃບແຈ້ງການຕ້ອງບອກເລກໂທຣະສັບ ແລະ ໂຄດການເຂົ້າເຖິງອື່ນໆຕ່າງໆ ຫລື ເລກຊີ້ບອກສ່ວນຕົວ (PIN) ທີ່ຕ້ອງການເພື່ອຈະເຂົ້າຮ່ວມໃນການຟັງເຣື່ອງ.

(2) ໃບແຈ້ງການຟັງເຣື່ອງຕ້ອງບອກວ່າຖ້າຫາກວ່າຜູ້ອຸທອນພົກພາດທີ່ຈະເຂົ້າມາ ຫລື ມາຮ່ວມໃນການຟັງເຣື່ອງ, ການຟັງເຣື່ອງຈະຖືກຍົກເລີກຕາມທີ່ຖືກກ່າວໄວ້ຢູ່ໃນກົດໝາຍ Procedural Rule 5.

(3) ໃບແຈ້ງການຟັງເຣື່ອງໂດຍການສອດຄ່ອງນໍາກົດຣະບຽບຂອງຣັດຖະບານກາງຕ້ອງບອກວ່າຖ້າຫາກວ່າຜູ້ອຸທອນ ຫລື ພະຍານຕ້ອງການການຊ່ວຍເຫລືອນໍາການເຂົ້າເຖິງ ຫລື ການບໍຣິການດ້ານນາຍແປພາສາ, ການບໍຣິການເຫລົ່ານີ້ຈະຖືກເອົາໃຫ້ໂດຍບໍ່ຄິດຄ່າຕໍ່ຜູ້ອຸທອນ ຫລື ພະຍານ. ໃບແຈ້ງການຕ້ອງລວມເອົາໃບຟອມເພື່ອວ່າບຸກຄົນຈະຊີ້ບອກວ່າການຊ່ວຍເຫລືອນໍາການເຂົ້າເຖິງ ຫລື ການບໍຣິການດ້ານນາຍແປພາສາແມ່ນຕ້ອງການຕາມທີ່ຖືກບັນຣະຍາຍຢູ່ໃນກົດໝາຍ Procedural Rule 16.

ສິດອໍານາດ: 45 CFR sections 155.205, 155.535

## 10. ການຟັງເຣື່ອງ

(1) ການຟັງເຣື່ອງຈະຖືກດໍາເນີນໂດຍເຈົ້າໜ້າທີ່ຮັບຜິດຊອບ, ໂດຍທາງໂທຣະສັບ. ການຟັງເຣື່ອງຈະຖືກດໍາເນີນໂດຍຕົນເອງ ຫລື ໂດຍແບບທາງອື່ນທີ່ຖືກເຫັນພ້ອມນໍາກັນໂດຍ Exchange ແລະ ຜູ້ອຸທອນ. ການຟັງເຣື່ອງຈະຖືກບັນທຶກໄວ້ທາງເອເລັກໂຕຣນິກ.

(2) ການຟັງເຣື່ອງຈະຖືກດໍາເນີນໂດຍເຈົ້າໜ້າທີ່ຮັບຜິດຊອບຜູ້ທີ່ບໍ່ໄດ້ພົບພັນນໍາໂດຍກົງໃນການພິຈາຣະນາເບິ່ງເງື່ອນໄຂຮັບເອົາທີ່ຖືກອຸທອນ.

(3) ໃນເວລາຟັງເຣື່ອງ, ຜູ້ອຸທອນຈະ
   (a) ສະເນີຄຳໃຫ້ການທີ່ກ່ຽວຂ້ອງນຳຂອງພະຍານຄົນນຶ່ງ ຫລື ຫລາຍຄົນ.
   (b) ສະເນີເອກສານ ແລະ ຫລັກຖານທີ່ກ່ຽວຂ້ອງນຳອື່ນໆທີ່ສະແດງໃຫ້ເຫັນວ່າການພິຈາຣະນາເບິ່ງຂອງ Exchange ແມ່ນບໍ່ຖືກຕ້ອງ ຫລື ວ່າຂໍ້ມູນທີ່ກ່ຽວຂ້ອງທຸກໆຢ່າງບໍ່ໄດ້ຖືກພິຈາຣະນາເບິ່ງ.
   (c) ປະເຊີນຫນ້ານຳ ແລະ ສອບປາກຄຳພະຍານຂອງຝ່າຍກົງກັນຂ້າມ, ແລະ ພິສູດຫລັກຖານວ່າບໍ່ເປັນຈິງ.
   (d) ສາເນີການໂຕ້ຖຽງກັນຂອງເຂົາເຈົ້າໂດຍປາສຈາກການຕັດຄວາມກັນ.

ສິດອຳນາດ: 45 CFR section 155.535

## 11. ມາດຕະຖານຂອງການກວດເບິ່ງຄືນ

ເຈົ້າຫນ້າທີ່ຮັບຜິດຊອບຕ້ອງກວດເບິ່ງຄືນບັນທຶກຂອງການອຸທອນ de novo; ຫລັກຖານທຸກໆຢ່າງຕ້ອງຖືກພິຈາຣະນາເບິ່ງໂດຍປາສຈາກການຖ່ວງດຶງຕໍ່ຄຳຕັດສິນທີ່ຖືກເຣັດອອກມາຢູ່ໃນການພິຈາຣະນາເບິ່ງເງື່ອນໄຂຮັບເອົາຕົ້ນສະບັບ.

ສິດອຳນາດ: 45 CFR section 155.535

## 12. ຄຳຕັດສິນຂອງການອຸທອນ

(1) ເຈົ້າຫນ້າທີ່ຮັບຜິດຊອບຕ້ອງອອກຄຳຕັດສິນໃນການອຸທອນໄປຫາຜູ້ອຸທອນພາຍໃນ 90 ວັນຂອງວັນທີທີ່ Exchange ໄດ້ຮັບຄຳຮ້ອງຂໍເອົາການອຸທອນ, ຍົກເວັ້ນແຕ່ຢູ່ໃນກໍຣະນີຂອງການອຸທອນເຣັດໃຫ້ແລ້ວໄວພາຍໃຕ້ກົດຫມາຍ Procedural Rule 6.

(2) ຄຳຕັດສິນຂອງການອຸທອນຕ້ອງເປັນລາຍລັກອັກສອນ, ຖືກອີງຕາມຫລັກຖານຢູ່ໃນບັນທຶກເທົ່ານັ້ນ, ແລະ ລວມເອົາ:
   (a) ຄຳຕັດສິນ, ລວມເອົາການບັນຣະຍາຍເປັນພາສາງ່າຍໆທັມມະດາກ່ຽວກັບຜົນສະທ້ອນເຖິງເງື່ອນໄຂຮັບເອົາຂອງຜູ້ອຸທອນ;
   (b) ສະລູບຄວາມຂອງຂໍ້ມູນຄວາມຈິງທີ່ສຳຄັນ;
   (c) ຄຳແຈ້ງການຂອງພື້ນຖານທາງກົດຫມາຍ, ລວມທັງກົດຣະບຽບທີ່ອູ້ມຊູຄຳຕັດສິນອັນນີ້;
   (d) ວັນທີທີ່ມີຜົນບັງຄັບໃຊ້ໄດ້ຂອງຄຳຕັດສິນ;
   (e) ຄຳອະທິບາຍກ່ຽວກັບສິດທິຂອງຜູ້ອຸທອນທີ່ຈະອຸທອນຄຳຕັດສິນຂອງ Exchange ໄປຫາ U.S. Department of Health and Human Services.

ສິດອຳນາດ: 45 CFR section 155.545

**13. ການອຸທອນໃສ່ຄຳຕັດສິນຂອງ Exchange ໄປຫາ HHS**

(1) ດ້ວຍການຍົກເວັ້ນຂອງການອຸທອນຂອງນາຍຈ້າງ, ຖ້າຫາກວ່າຜູ້ອຸທອນບໍ່ເຫັນພ້ອມນຳຄຳຕັດສິນຂອງການອຸທອນຂອງ Exchange, ເຂົາເຈົ້າຈະຍື່ນການອຸທອນໄປຫາ United States Department of Health and Human Services (HHS) ໄດ້ພາຍໃນ 30 ວັນຂອງວັນທີຂອງໃບແຈ້ງການຂອງຄຳຕັດສິນຂອງການອຸທອນ.

(2) The Exchange ຈະເອົາໂກປີຂອງໃບຟອມທີ່ເໝາະສົມໃຫ້ຜູ້ອຸທອນຕາມຄຳຮ້ອງຂໍ, ຫລື ຜູ້ຮ້ອງຂໍຈະໄປທີ່ https://www.healthcare.gov/ marketplace-appeals/appeal-form-instructions ສຳລັບໂກປີຂອງໃບຟອມ. ຫລັງຈາກທີ່ຂຽນປະກອບໃບຟອມແລ້ວ, ຜູ້ອຸທອນຕ້ອງສົ່ງໃບຟອມທາງໄປສະນີໄປທີ່:

Health Insurance Marketplace
Attn: Appeals
465 Industrial Blvd
London, KY 40750-0061

ຫລື ແຟກຊ໌ຄຳຮ້ອງຂໍເອົາການອຸທອນໄປຫາສາຍແຟກຊ໌ທີ່ປອດໄພ: 1-877-369-0130.

(3) The Exchange ຕ້ອງສົ່ງຄຳຮ້ອງຂໍເອົາການອຸທອນເບື້ອງຕົ້ນ ແລະ ບັນທຶກການອຸທອນຂອງຜູ້ຮ້ອງຂໍໄປຫາ HHS ໂດຍຜ່ານການປະສານງານທາງເອເລກໂຕຣນິກທີ່ປອດໄພ.

ສິດອຳນາດ: 45 CFR sections 155.505 and 155.545

**14. ການເຮັດໝາຍນັດພົບໃໝ່ສຳລັບການປະຊຸມກ່ອນການຟັງເຣື່ອງ ຫລື ການຟັງເຣື່ອງ**

(1) ຜູ້ອຸທອນຈະຮ້ອງຂໍໃຫ້ Exchange ທີ່ຈະເຮັດໝາຍນັດພົບໃໝ່ສຳລັບການປະຊຸມກ່ອນການຟັງເຣື່ອງ ຫລື ການຟັງເຣື່ອງ.

(2) ຄຳຮ້ອງຂໍໃຫ້ເຮັດໝາຍນັດພົບໃໝ່ຕ້ອງຖືກເຮັດເປັນລາຍລັກອັກສອນ ແລະ ບອກເຫດຜົນດີເພື່ອຈະເຮັດໝາຍນັດພົບໃໝ່ສຳລັບການປະຊຸມກ່ອນການຟັງເຣື່ອງ ຫລື ການຟັງເຣື່ອງ. ເຈົ້າໜ້າທີ່ຮັບຜິດຊອບຈະພິຈາຣະນາເບິ່ງໜັງສືຄຳຮ້ອງ ແລະ ອອກໜັງສືຄຳຕັດສິນໂດຍທັນທີໂລດວ່າຈະອະນຸຍາດ ຫລື ປະຕິເສດຄຳຮ້ອງຂໍໂດຍທັນທີໂລດ.

(3) ຄຳຮ້ອງຂໍໃຫ້ເຮັດໝາຍນັດພົບໃໝ່ສຳລັບການປະຊຸມກ່ອນການຟັງເຣື່ອງ ຫລື ການຟັງເຣື່ອງຈະບໍ່ຖືກອະນຸມັດໃຫ້ຖ້າຫາກວ່າມັນຈະເຮັດໃຫ້ຄຳຕັດສິນຂັ້ນສຸດທ້າຍໃນການອຸທອນຈະຖືກເຮັດດົນນານກວ່າ 90

ວັນຫລັງຈາກທີ່ Exchange ໄດ້ຮັບການອຸທອນ.

ສິດອຳນາດ: 45 CFR sections 155.505 and 155.535

## 15. ການແຕ່ງຕັ້ງຜູ້ຕາງໜ້າເພື່ອຈະສະແດງຕົວສຳລັບຜູ້ອຸທອນ

(1) ຜູ້ອຸທອນຈະແຕ່ງຕັ້ງບຸກຄົນໃດບຸກຄົນນຶ່ງ, ເຊັ່ນວ່າທະນາຍຄວາມ ຫລື ສະມາຊິກຄອບຄົວ, ຫລື ອົງການ, ທີ່ຈະສະແດງຕົວໃນນາມຂອງເຂົາເຈົ້າໃນຣະຫວ່າງການອຸທອນ, ລວມທັງການຮ້ອງຂໍເອົາການອຸທອນ ພາຍໃຕ້ກົດຫມາຍ Procedural Rule 4.

(2) ຜູ້ອຸທອນຕ້ອງໄດ້ແຕ່ງຕັ້ງຜູ້ຕາງໜ້າເປັນລາຍລັກອັກສອນ, ຕາມຕໍ່ລົງໄປນີ້:

(a) ຢູ່ໃນໃບຟອມອຸທອນທີ່ຖືກເອົາໃຫ້ໂດຍ Exchange ແລະ ຖືກເຊັນຊື່ໃສ່ໂດຍຜູ້ອຸທອນ;

(b) ຢູ່ໃນໜັງສືເອກສານອື່ນໆທີ່ຖືກເຊັນຊື່ໃສ່ໂດຍຜູ້ອຸທອນ;

(c) ໂດຍການແຕ່ງຕັ້ງຜູ້ຕາງໜ້າຜ່ານຣະບົບເງື່ອນໄຂຮັບເອົາຂອງ Healthplanfinder;

(d) ໂດຍໃບແຈ້ງການປາກົດຕົວຖືກສົ່ງໄປທາງ US Mail ຫລື ອີເມລ໌, ຖ້າຫາກວ່າຜູ້ຕາງໜ້າ ທີ່ຖືກອະນຸຍາດເປັນທະນາຍຄວາມທີ່ເຂົ້າມາເຮັດວຽກຢູ່ໃນຣັດວໍຊິງຕັນ; ຫລື

(e) ໂດຍເອກສານຕາມກົດຫມາຍເພື່ອຈະສະແດງຕົວໃນນາມຂອງຜູ້ອຸທອນ, ເຊັ່ນວ່າຄຳສັ່ງຄວາມ ຄຸ້ມຄອງ ຫລື ອຳນາດຂອງທະນາຍຄວາມ.

ສິດອຳນາດ: 45 CFR sections 155.227 and 155.505

## 16. ຄວາມຊ່ວຍເຫລືອນຳການເຂົ້າເຖິງ/ນາຍແປພາສາ

(1) ກົດຣະບຽບຂອງຣັດຖະບານກາງບົ່ງໃຫ້ການດຳເນີນການອຸທອນຂອງ Exchange ໃຫ້ສອດຄ່ອງນຳກົດກຳນົດຂອງການເຂົ້າເຖິງຢູ່ໃນກົດຫມາຍ § 155.205(c). ອັນນີ້ລວມເອົາການເອົາລາຍຣະອຽດໃຫ້ຜູ້ຮ້ອງຂໍ ແລະ ຜູ້ຈົດຊື່ໃນພາສາທັມມະດາ ແລະ ໃນແບບທີ່ເຂົ້າເຖິງໄດ້ ແລະ ທັນຕາມເວລາໄປຫາ:

(a) ບຸກຄົນຜູ້ທີ່ດຳຣົງຊີວິດນຳຄວາມເສັຽອົງຄະ, ລວມທັງແວບໄຊທ໌ທີ່ເຂົ້າເຖິງໄດ້ ແລະ ຊ່ອງທາງ ຂອງການຊ່ວຍເຫລືອແນວອື່ນໆ ແລະ ການບໍຣິການໂດຍບໍ່ຄິດຄ່າແນວໃດຕໍ່ບຸກຄົນໂດຍນັ້ນ ການສອດຄ່ອງນຳກົດຫມາຍ Americans with Disabilities Act ແລະ section 504 ຂອງກົດຫມາຍ Rehabilitation Act;

(b) ບຸກຄົນຜູ້ທີ່ມີຄວາມຄ່ອງແຄ້ວທາງພາສາອັງກິດທີ່ຈຳກັດໂດຍຜ່ານການໃຫ້ໂອກາດດ້ານການບໍລິການທາງພາສາໂດຍບໍ່ຄິດຄ່າຕໍ່ບຸກຄົນ, ລວມທັງ:

(i) ການແປພາສາທາງປາກເປົ່າ, ລວມທັງການບໍລິການແປພາສາທາງໂທລະສັບໃນຢ່າງໜ້ອຍ 150 ພາສາ;

(ii) ການແປພາສາທາງໜັງສື; ແລະ

(iii) ໝາຍບອກ 15 ພາສາສູດຍອດທີ່ບໍ່ແມ່ນພາສາອັງກິດຊີ້ບອກການມີໄວ້ໃຫ້ໃນການບໍລິການດ້ານການແປພາສາ; ແລະ

(c) ແຈ້ງບອກບຸກຄົນກ່ຽວກັບການມີໄວ້ໃຫ້ໃນການບໍລິການເຫລົ່ານີ້ແລະ ວ່າຈະເຂົ້າເຖິງການບໍລິການນີ້ໄດ້ແນວໃດ.

(2) ໃບຟອມການອຸທອນຂອງ Exchange ຕ້ອງລວມເອົາບ່ອນທີ່ບຸກຄົນຈະຊີ້ບອກວ່າເຂົາເຈົ້າຕ້ອງການການຊ່ວຍເຫລືອນຳການເຂົ້າເຖິງ ຫລື ນາຍພາສາ ຫລື ບໍ່.

(3) ພີ່ນ້ອງຂອງຝ່າຍໃດຝ່າຍນຶ່ງ ຫລື ພະນັກງານຂອງ Exchange ຈະບໍ່ຮັບໃຊ້ໃຫ້ເປັນນາຍແປພາສາຢູ່ໃນການດຳເນີນການອຸທອນຂອງ Exchange.

(4) ເຈົ້າໜ້າທີ່ຮັບຜິດຊອບຕ້ອງພິຈາລະນາເບິ່ງວ່າການຊ່ວຍເຫລືອນຳການເຂົ້າເຖິງ ຫລື ນາຍແປພາສາແມ່ນຖືກຕ້ອງແນ່ນອນ ຫລື ບໍ່, ອູ້ມຊູການດຳເນີນການຢ່າງໄດ້ຜົນດີ ແລະ ບໍ່ລຳອຽງສຳລັບຜູ້ອຸທອນ ຫລື ພະຍານ ຫລື ບໍ່ ຜູ້ທີ່ຮ້ອງຂໍເອົາການບໍລິການເຂົ້າເຖິງ ຫລື ນາຍແປພາສາ. ຖ້າຫາກວ່າໃນທຸກໆເວລາໃນລະຫວ່າງການດຳເນີນການ, ເຈົ້າໜ້າທີ່ຮັບຜິດຊອບພິຈາລະນາເຫັນວ່າການບໍລິການເຂົ້າເຖິງ ຫລື ນາຍແປພາສາບໍ່ໄດ້ເອົາໃຫ້ການບໍລິການທີ່ຖືກຕ້ອງ, ມີຜົນໃຊ້ການໄດ້ດີ ແລະ ບໍ່ລຳອຽງ, ເຈົ້າໜ້າທີ່ຮັບຜິດຊອບຈະຕ້ອງໄດ້ຍົກເລີກນາຍແປພາສາ ຫລື ການບໍລິການເຂົ້າເຖິງອື່ນໆ ແລະ ຊອກເອົາການບໍລິການຂອງນາຍແປພາສາ ຫລື ການບໍລິການເຂົ້າເຖິງທີ່ມີຄຸນນະວຸດທິສູງກວ່າ.

(5) ເຈົ້າໜ້າທີ່ຮັບຜິດຊອບຕ້ອງອະນຸຍາດໃຫ້ມີເວລາພຽງພໍໃນລະຫວ່າງການດຳເນີນການສຳລັບການການແປພາສາໃນເອກສານຂອງນາຍພາສາທີ່ຈະຖືກເຮັດ ແລະ ເຂົ້າໃຈໄດ້.

ສິດອຳນາດ: 45 CFR sections 155.205 and 155.545

## 17. ການຖອນຄຳຮ້ອງຂໍເອົາການຟັງເຣື່ອງ

(1) ບຸກຄົນຜູ້ທີ່ໄດ້ຮ້ອງຂໍເອົາການອຸທອນຈະຖອນຄຳຮ້ອງຂໍເອົາການອຸທອນໄດ້ດ້ວຍເຫດຜົນແນວໃດກໍໄດ້ໃນ

ທຸກໆເວລາໃນລະຫວ່າງການດຳເນີນການອຸທອນ. ຄຳຮ້ອງຂໍເອົາການຖອນຕ້ອງຖືກເຮັດ:

(a) ໃສ່ໃບຟອມທີ່ຖືກເອົາໃຫ້ໂດຍ Exchange ແລະ ຖືກເຊັນຊື່ໃສ່ໂດຍຜູ້ອຸທອນ, ຫລື ໃສ່ໃນການຕິດຕໍ່ສື່ສານຢ່າງອື່ນໆເປັນຫນັງສື, ແຟກຊ໌ເຂົ້າມາ, ຫລື ອີແມລ໌ມາ; ຫລື

(b) ໂດຍທາງໂທລະສັບຖ້າຫາກວ່າ Exchange ອັດບັນທຶກສຽງໄວ້ຫມົດໃນຄຳແຈ້ງການພາຍໃຕ້ຄຳສາບານກ່ຽວກັບການເວົ້າເທັດຂອງຜູ້ອຸທອນ ແລະ Exchange ສົ່ງໃບຫນັງສືຢືນຢັນຮັບຮູ້ການຖອນໄປຫາຜູ້ອຸທອນ; ຫລື

(c) ໂດຍທາງປາກເປົ່າມຳເຈົ້າຫນ້າທີ່ຮັບຜິດຊອບໃນລະຫວ່າງການດຳເນີນການອຸທອນ.

(2) ບຸກຄົນຜູ້ທີ່ໄດ້ຮ້ອງຂໍເອົາການອຸທອນຈະຖອນຄຳຮ້ອງຂໍເອົາການອຸທອນເພື່ອວ່າຈະຊອກຫາເອົາການກວດເບິ່ງຄືນໃນການປະຕິເສດເງື່ອນໄຂຮັບເອົາໂຄງການ Washington Apple Health. ຄຳຮ້ອງຂໍເອົາການຖອນຕ້ອງຖືກເຮັດ:

(a) ໃສ່ໃບຟອມທີ່ຖືກເອົາໃຫ້ໂດຍ Exchange ແລະ ຖືກເຊັນຊື່ໃສ່ໂດຍຜູ້ອຸທອນ, ຫລື ໃສ່ໃນການຕິດຕໍ່ສື່ສານຢ່າງອື່ນໆເປັນຫນັງສື, ແຟກຊ໌ເຂົ້າມາ, ຫລື ອີແມລ໌ມາ;

(b) ໂດຍທາງໂທລະສັບຖ້າຫາກວ່າ Exchange ອັດບັນທຶກສຽງໄວ້ຫມົດໃນຄຳແຈ້ງການພາຍໃຕ້ຄຳສາບານກ່ຽວກັບການເວົ້າເທັດຂອງຜູ້ອຸທອນ ແລະ Exchange ສົ່ງໃບຫນັງສືຢືນຢັນຮັບຮູ້ການຖອນໄປຫາຜູ້ອຸທອນ; ຫລື

(c) ໂດຍທາງປາກເປົ່າມຳເຈົ້າຫນ້າທີ່ຮັບຜິດຊອບໃນລະຫວ່າງການດຳເນີນການອຸທອນ.

ເມື່ອເວລາ Exchange ໄດ້ຮັບການຖອນຄຳຮ້ອງ, ເຂົາເຈົ້າຕ້ອງສົ່ງລາຍລະອຽດທຸກໆຢ່າງດ້ວຍຄວາມປອດພັຍກ່ຽວກັບການອຸທອນທີ່ຖືກຖອນໄປຫາ Health Care Authority.

(3) ໃບຟອມທີ່ຖືກເອົາໃຫ້ສຳລັບການຖອນເປັນລາຍລັກອັກສອນ ຕ້ອງບັນຈຸເຫດຜົນສຳລັບການຖອນ ແລະ ຕ້ອງມີການຮັບຮູ້ເປັນລາຍເຊັນວ່າຜູ້ອຸທອນໄດ້ຖອນຄຳຮ້ອງຂໍເອົາການອຸທອນຢ່າງເປັນທີ່ຮູ້ຈັກກັນ ແລະ ສິດທິຂອງເຂົາເຈົ້າຕໍ່ການຟັງເຣື່ອງ.

(4) ຖ້າຫາກວ່າບຸກຄົນຖອນການອຸທອນ, ເຈົ້າຫນ້າທີ່ຮັບຜິດຊອບການອຸທອນ, ຈະອອກຄຳສັ່ງການຍົກເລີກການອຸທອນພາຍໃຕ້ກົດລະບຽບຂັ້ນຕອນ Procedural Rule 5.

ສິດອຳນາດ: 45 CFR sections 155.505 and 155.530

**18. ການສົ່ງເອກສານໄປຫາ Exchange**

(1) ເມື່ອເວລາກົດລະບຽບຂັ້ນຕອນເຫລົ່ານີ້ຫລື ຄຳສັ່ງຂອງເຈົ້າຫນ້າທີ່ຮັບຜິດຊອບບົ່ງໃຫ້ຜູ້ຊຸທອນທີ່ຈະສົ່ງເອກສານທຸກໆຢ່າງ ຫລື ລາຍລະອຽດອື່ນໆໄປຫາ Exchange, ຜູ້ຊຸທອນຈະສົ່ງລາຍລະອຽດມາໂດຍທາງ:

(a) U.S. ໄປສະນີ, ໄປຫາ WAHBE Appeals Program, P.O. Box 1757, Olympia, WA 98507-1757.

(b) ອີແມລ໌, ໄປຫາ appeals@wahbexchange.org.

(c) ທາງແຟກຊ໌, ໄປຫາ 360-841-7653.

(d) ສົ່ງໃຫ້ດ້ວຍມື, ຫລື ການບໍລິການສົ່ງໃຫ້ໂດຍບໍລິສັດການຄ້າ, ໄປຫາ 810 Jefferson St SE, Olympia, WA 98501-1417

(2) ເມື່ອເວລາກົດລະບຽບຂັ້ນຕອນເຫລົ່ານີ້ຫລື ຄຳສັ່ງຂອງເຈົ້າຫນ້າທີ່ຮັບຜິດຊອບບົ່ງໃຫ Exchange ທີ່ຈະຮັບເອົາເອກສານ,ເອກສານນັ້ນຈະຖືກຖືວ່າໄດ້ຮັບແລ້ວໂດຍ Exchange ເມື່ອເວລາມັນມາຮອດຫ້ອງການຂອງ Exchange ໃນລະຫວ່າງເວລາເປີດຫ້ອງການຕາມປົກກະຕິ.